**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 1137 /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2020

# ແຈ້ງການ

**ເຖິງ**: ບັນດາວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs)

**ເລື່ອງ**:ຂະຫຍາຍເວລາປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE)

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ຄຳແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 531/ກງ, ລົງວັນທີ 26 ກຸມພາ 2015.

ເພື່ອເຮັດໃຫ້ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ສາມາດຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRSs) ທີ່ສະພາມາດຕະຖານສາກົນດ້ານການບັນຊີ (IASB) ໄດ້ຮັບຮອງ ແລະ ປະກາດໃຊ້ແຕ່ລະໄລຍະ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ແລະ ການຂະຫຍາຍເວລາໄລຍະຂ້າມຜ່ານການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRSs) ຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ຈາກເດີມທີ່ຈະສິ້ນສຸດໃນ ປີ 2021 ຕາມແຈ້ງການຂອງຫ້ອງການກະຊວງການເງິນສະບັບເລກທີ 697/ກງ.ຫກລົງວັນທີ 20 ມີນາ 2017 ໃຫ້ສືບຕໍ່ຂະຫຍາຍເວລາຕື່ມອີກຫ້າປີມາເປັນ 2025 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນເຕັມສ່ວນ (Full IFRSs) ນັບແຕ່ປີ 2026 ເປັນຕົ້ນໄປ.

**ກະຊວງການເງິນ ອອກແຈ້ງການດັ່ງນີ້:**

1. ໃນໄລຍະຂ້າມຜ່ານ ແຕ່ປີ 2021 ເຖິງ 2025 ໃຫ້ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ສ້າງເອກະສານລາຍງານການເງິນຕາມມາດຕະຖານລາຍງານການເງິນທີ່ຖືກຮັບຮອງຕາມຄວາມເໝາະສົມ ແລະ ສອດຄ່ອງກັບລະບຽບກົດໝາຍກຳນົດອອກແຕ່ລະໄລຍະ. ພ້ອມດຽວກັນນັ້ນ, ໃຫ້ວິສາຫະກິດດັ່ງກ່າວ ສ້າງແຜນການລະອຽດ ກ່ຽວກັບ ການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດມາດ

ຕະຖານສາກົນດ້ານການລາຍງານການເງິນເຕັມສ່ວນ (Full IFRSs) ແລ້ວສົ່ງໃຫ້ກົມບັນຊີ ກະຊວງການເງິນ ເພື່ອຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດແຜນດັ່ງກ່າວ.

2. ສໍາລັບ ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ( PIE ) ທີ່ໄດ້ເລີ່ມປະຕິບັດມາດຕະຖານລາຍງານການເງິນ (IFRS) ໃນໄລຍະແຕ່ປີ 2017-2019 ຜ່ານມາ ໃຫ້ສືບຕໍ່ຈັດຕັ້ງປະຕິບັດ ແລະ ໃຫ້ສົ່ງແຜນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນເຕັມສ່ວນ (Full IFRSs) ແຕ່ປີ 2021 ເຖິງ 2025 ໃຫ້ກົມບັນຊີ ກະຊວງການເງິນ ເພື່ອຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດແຜນດັ່ງກ່າວ.

3. ສໍາລັບ ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ( PIE ) ໃດໜຶ່ງ ຫາກມີຄວາມພ້ອມໃນການສ້າງເອກະສານລາຍງານການເງິນ ຕາມມາດຕະຖານສາກົນດ້ານການລາຍງານການເງິນເຕັມສ່ວນ ( Full IFRSs) ໃຫ້ເລີ່ມຈັດຕັ້ງປະຕິບັດໄດ້ເລີຍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 5 ຂອງຄໍາແນະນໍາວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການບັນຊີ.

4. ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ( PIE ) ຕ້ອງປະຕິບັດຕາມລະບຽບການເພີ່ມເຕີມຂອງຂະແໜງການທີ່ຄຸ້ມຄອງວິສາຫະກິດຕົນ.

5. ໃນໄລຍະຈັດຕັ້ງປະຕິບັດ ຫາກນິຕິບຸກຄົນ ທີ່ພົບຄວາມຫຍຸ້ງຍາກ ແມ່ນໃຫ້ປະສານສົມທົບປຶກສາຫາລືນໍາ ກົມບັນຊີ ກະຊວງການເງິນ ເພື່ອຊອກວິທີແກ້ໄຂໃຫ້ສອດຄ່ອງແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີ ກະຊວງການເງິນ**

ສົມດີ ດວງດີ